# ຂະບວນການແຂ່ງຂັນກິລາມິດຕະພາບ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ກອງບັນຊາການ ປ້ອງກັນທີ່ຕັ້ງ

ໃນຕອນແລງຂອງວັນພະຫັດ ທີ **02 ກຸມພາ 2017** ເວລາ **16:00** ໂມງໄດ້ມີຂະບວນ ການແຂ່ງຂັນກິລາມິດຕະພາບ ລະຫວ່າງ **ທຄຕລ** ແລະ **ກອງບັນຊາການປ້ອງກັນທີ່ຕັ້ງ** ທີ່ເດີ່ນກິລາ ກອງບັນຊາການປ້ອງກັນທະຫານທີ່ຕັ້ງ ບ້ານ ປາກທ້າງ, ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງທ່ານ ພັນ ຊະນະ ຄຸນນຸວົງ ຮອງຄະນະອຳນວຍການ ທຄຕລ ທັງເປັນຜູ້ຊີ້ນຳ ວຽກງານອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍສະມາຊິກກຳມະບານ, ຊາວໜຸ່ມ, ແມ່ຍິງ, ພະນັກງານ ແລະ ນັກສຶກສາຈາກທັງສອງພາກສ່ວນ ປະເພດການແຂ່ງຂັນກິລາປະກອບດ້ວຍ: ກິລາບານເຕະ ຊາຍ, ກິລາເປຕັງຊາຍ ແລະ ກິລາເປຕັງຍິງ.

ການແຂ່ງຂັນດຳເນີນໄປດ້ວຍບັນຍາກາດທີ່ ເບີກບານມ່ວນຊື່ນ, ຄວາມສາມັກຄີຮັກແພງ ແລະ ມີນ້ຳໃຈນັກກິລາເຊິ່ງກັນ ແລະ ກັນ, ຫຼັງຈາກການແຂ່ງຂັນກິລາສິ້ນສຸດລົງ ໄດ້ມີການຈັດພາເຂົ້າສາມັກຄີເພື່ອຮັດແໜ້ນຄວາມສຳພັນກັນຂອງທັງສອງພາກສ່ວນໃຫ້ແໜ້ນແຟ້ນຍິ່ງຂຶ້ນ ເພື່ອເຮັດໃຫ້ການພົວພັນຮ່ວມມືວຽກງານລະຫວ່າງ 2 ພາກສ່ວນມີຄວາມຄ່ອງຕົວ ແລະ ໄດ້ຮັບຜົນສຳເລັດຮ່ວມກັນ.











ວັນທີ 07 ກຸມພາ 2017, ໂດຍ: ທ້າວ ສຸລິຍົງ ສຸກຈັນດີ